ສຳນັກງານໃຫຍ່

ເລກທີ: 3524 /ທຄຕລ 2024
ນະຄອນຫຼວງວຽງຈັນ, ວັນທີ: 11 OCT 2024

ໜັງສືແຈ້ງເຊີນ

ເຖິງ : ບັນດາບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍເຄື່ອງໄອທີ ໃນນະຄອນຫຼວງວຽງຈັນ.

ເລື່ອງ: ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາເຄື່ອງອຸປະກອນໄອທີ ແລະ ລະບົບໜ່ວຍແມ່ຂ່າຍ Server.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍເຄື່ອງໄອທີ ຊາບວ່າ ທຄຕລ ມີຄວາມຕ້ອງການ ເຄື່ອງອຸປະກອນໄອທີ ແລະ ລະບົບໜ່ວຍແມ່ຂ່າຍ Server ໃໝ່, ເພື່ອມານຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງ ທະນາຄານ, ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນລາຄາ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

1. ລາຍການທີ 1: Server ຈຳນວນ 06 ໜ່ວຍ

Brand	IBM Power 10 (Model: L1024)
Quantity	6 Servers
CPU	x2 Socket, Speed 3.4 - 4.0 GHz
CPU Core Enable	24 Core
RAM	4096 GB
NIC	Speed 25Gbps SFP+ x4 port PCIe (x2 Port / Card) with Optical transceiver
HBA	32Gb Fibre Channel Adapter x4 port PCIe (x2 Port / Card) with Optical transceiver
FC Cables	x8 Cables (3 meters OM3/OM4 LC-LC)
Hard Disk	x4, 800GB SSD NVMe (Support Mirroring)
Power Supplies	x2
Power Cable	x2, C13 - C14 (2 meters)
IBM PowerVM	V4
OS Support	Red Hat Enterprise Linux for Power
RedHat Subscription	3 Years
Support + MA	3 years (Hardware and Software)
Post Sale Support	- Can open case via following channels; Web, Chat, Email or Phone - Case(s) can be escalated based on severity level - SLA: 9x5 Next Business Day - Onsite hardware repair or parts exchange by Vendor's Authorized Service Provider
Training	1. IBM Power Management & PowerHA 2. 2 Participants

2. ລາຍການທີ 2: Storage Extension Huawei Dorado 6000v6

Storage Extension	Huawei Dorado 6000v6
Drive Enclosure	1
Drive Type	7.68TB SSD NVMe

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

Quantity of Drive	36
Additional Feature License	HyperMetro, HyperCDP and SmartVirtualization (for 3 devices)
Warranty + MA	3 Years

3. ລາຍການທີ 3: Huawei OcenProtect X8000 Appliances ຈຳນວນ 02 ໜ່ວຍ

Backup Device	Huawei OcenProtect X8000 Appliances
Quantity	2
Controller	Dual
CPU per controller	64 core @ 2.6GHz
RAM per controller	512GB
Drive Type	7.68TB SSD SAS Disk
Quantity of Drive	25
Enclosure	1
Expansion Interface Module	x2 Cards, per Card: 4 ports SmartIO I/O module(SFP28,32Gb FC)
	x4 Cards, per Card: 4 ports SmartIO I/O module(SFP+,10Gb ETH)
	x2 Cards, per Card: 4-port 10Gb ETH I/O module (supporting IPSec encryption,SFP+,10Gb ETH)
FC Cables	x8 Cables (3 meters OM3/OM4 LC-LC)
Software (License)	Dedicated Backup Storage Software Essential License(including 40 TB capacity license) - q-ty 1
	Dedicated Backup Storage Software Capacity License(41~300 TB) - q-ty 152
	Data Backup Capacity License(Per TiB) - q-ty 142
	HyperEncryption License - q-ty 1
	HyperDetect (anti-Ransomware) License - q-ty 1
Warranty + MA	3 Years
Training	1. OceanProtect Administration 2. 2 Participants

- **ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍເຄື່ອງໄອທີ ທີ່ມີຄວາມຕ້ອງການຍື່ນຊອງປະມູນລາຄາຕ້ອງປະກອບ ເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:**
- **<u>ເອກະສານ ຊອງທີ 1:</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ, ດຳເນີນທຸລະກິດ ຢ່າງໜ້ອຍ 03 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນ ປີ 2023 ຫຼື 2024 ແລະ ໃບຢັ້ງຢືນການເປັນຕົວແທນຈຳໜ່າຍທີ່ມີໃບຮັບຮອງ ຫຼື ເປັນໂຕແທນຂາຍຢ່າງເປັນທາງການຂອງຜະລິດຕະພັນດັ່ງກ່າວ.
2. ມີທີມງານທີ່ຊ່ຽວຊານໃນການອອກແບບ, ຕິດຕັ້ງ ແລະ ຄຸ້ມຄອງອຸປະກອນດັ່ງກ່າວ ທີ່ສາມາດໃຫ້ຄຳປຶກສາ ແລະ ແກ້ໄຂບັນຫາທາງດ້ານເຕັກນິກ.
3. ເອກະສານລາຍລະອຽດສະເປັກສິນຄ້າ, ການຮັບປະກັນສິນຄ້າ, ໄລຍະເວລາການຈັດສົ່ງສິນຄ້າ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.

4. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ **ວັນຈັນ, ວັນທີ 28/10/2024 ເວລາ 11:00 ໂມງ** ໂດຍການສົ່ງຜ່ານ ເຂົ້າ **E-mail:** **procurement@bcel.com.la** **ແລະ** **inspect-it@bcel.com.la** ເພື່ອໃຫ້ສູນໄອທີໄດ້ກວດສະເປັກ.

- **ເອກະສານ ຊອງທີ 2: (ປິດຊອງ)**

1. ໃບສະເໜີລາຄາ ໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການໃຫ້ລະອຽດ ແລະ ຕ້ອງລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 05/02/2025)** ຫຼື ແຊັກທີ່ວີຊ້ຳແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.
3. **ວັນອັງຄານ, ທີ 05/11/2024 ເວລາ 09:00 ໂມງ** ແມ່ນມື້ເປີດຊອງປະມູນ. ສະນັ້ນ, ໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມໃຫຍ່ ຊັ້ນ 5 ອາຄານ C ຫ້ອງ 5/2 ສຳນັກງານໃຫຍ່ ທຄຕລ.

- **ໝາຍເຫດ:**

- ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດ ຂ້າງເທິງ.

❖ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

1. ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງຮັບຜິດຊອບຄ່າເສຍຫາຍທັງໝົດໃຫ້ແກ່ ທຄຕລ ໃນອັດຕາ 20% ຂອງມູນຄ່າລວມທີ່ສະເໜີປະມູນ.

- **ການຊຳລະຈະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

- **ງວດທີ 1:** ຊຳລະ 90% ຂອງມູນຄ່າ ພາຍໃນ 25 ວັນ ລັດຖະການ ພາຍຫຼັງໄດ້ຮັບເຄື່ອງ ແລະ ກວດກາຄວາມຖືກຕ້ອງຈາກຄະນະກຳມະການຕິດຕາມກວດກາ.
- **ງວດທີ 2:** ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄ້ຳປະກັນຄຸນນະພາບສິນຄ້າ 12 ເດືອນ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

ຜູ້ອຳນວຍການ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນັນທະລາດ ແກ້ວປະເສີດ

(ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ……/ທຄຕລ, ລົງວັນທີ ……..

ລ/ດ	ຜູ້ສະໜອງ	ເງື່ອນໄຂ									ໝາຍເຫດ
		ໃບທະບຽນວິສາຫະກິດ	ໃບຢັ້ງຢືນການເສຍອາກອນ	ໃບອະນຸຍາດດຳເນີນທຸລະກິດ	ໄລຍະເວລາໃນການດຳເນີນທຸລະກິດ	ຜົນງານຜ່ານມາ (ທີ່ເຄີຍສະໜອງ server ໃຫ້ພາກສ່ວນໃດແນ່)	ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ	ປະເທດຜະລິດ	ການຮັບປະກັນສິນຄ້າ	ກຳນົດສົ່ງ (ວັນ)	
1	ບ/ສ……	(xxx/ 02.01.2015)	(xxx/ 02.01.2015)	(xxx/ 02.01.2015)	…. ປີ	(ໃຫ້ລະບຸ)		ພາຍໃນ ຫຼື ຕ່າງປະເທດ (ລະບຸປະເທດ)	…. ປີ	……	

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ .....
ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ: